PEOPLE FOR PEAT

This project is funded by the European Union

# ເປັນຫຍັງການຄຸ້ມຄອງດິນຖ່ານຕົມແບບຍືນຍົງ ຈຶ່ງມີຄວາມສຳຄັນຕໍ່ການດຳລົງຊີວິດຂອງຊຸມຊົນ?

ດິນຖ່ານຕົມມີຜົນປະໂຫຍດຫຼາກຫຼາຍຕໍ່ການດຳລົງຊີວິດ ແລະ ສະໜອງລາຍຮັບທີ່ຍືນຍົງ. ຖ້າຫາກດິນຖ່ານຕົມຊຸດໂຊມລົງ, ຈະສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງຊຸມຊົນ.

ດິນຖ່ານຕົມທີ່ສົມບູນຈະເປັນບ່ອນຢູ່ອາໄສໃຫ້ແກ່ຊີວະນານາພັນ, ເກັບກັກທາດກາກບອນ, ແລະ ເປັນການອານຸລັກທຳມະຊາດ, ພ້ອມດຽວກັນນັ້ນ, ຍັງສ້າງລະບົບນິເວດທີ່ສຳຄັນລວມເຖິງການບຳບັດຮັກສາ ແລະ ເກັບກັກແຫຼ່ງນ້ຳທຳມະຊາດ, ສະພາບດິນຟ້າອາກາດ, ສົ່ງເສີມຄວາມປອດໄພດ້ານສະບຽງອາຫານ ແລະ ຊີວິດການເປັນຢູ່ໃຫ້ແກ່ຊຸມຊົນ.




ການປູກພືດໃນດິນເພື່ອຫຼຸດຜ່ອນອາຍກາສເຮືອນແກ້ວ ໝາຍເຖິງການປູກພືດໃນເຂດດິນບໍລິເວນນ້ຳ (ລວມເຖິງດິນຖ່ານຕົມ) ທີ່ປຽກຊຸ່ມຢູ່ຕະຫຼອດເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ລະບົບນິເວດແບບຍືນຍົງ.

**ທ່ານຮູ້ ຫຼື ບໍ່?**

Image Source : iucn.org | tropicalpeatlands.org | wetlands.org | @earthinnovate | rappler.com

@peopleforpeat | info@peopleforpeat.org